ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ຂໍ້ຄວນຮູ້ກ່ຽວກັບການປົກປ້ອງເງິນຝາກ

ທ່ານຜູ້ອ່ານທີ່ຮັກແພງ ເພື່ອເປັນສິ່ງຄໍ້າປະກັນໃຫ້ແກ່ການດໍາລົງຊີວິດ ຫຼາຍຄົນຈຶ່ງມັກເກັບອອມເງິນດ້ວຍການໄປຝາກນໍາທະນາຄານ ຫຼື ສະຖາບັນການເງິນຕ່າງໆເພື່ອຄວາມປອດໄພ ແລະ ຫວັງຜົນຕອບແທນເປັນດອກເບ້ຍ ແຕ່ຄໍາຖາມໜຶ່ງທີ່ມັກເກີດຂຶ້ນຕາມມານັ້ນກໍຄື: **ເງິນຝາກຂອງພວກເຮົາເຫຼົ່ານັ້ນມີຄວາມປອດໄພປານໃດ?** ດ້ວຍເຫດນີ້, ເພື່ອເປັນສິ່ງຊ່ວຍຄໍ້າປະກັນໃຫ້ແກ່ຜູ້ຝາກເງິນ ລັດຖະບານຈຶ່ງໄດ້ອອກລະບຽບການ ແລະ ຈັດຕັ້ງອົງການກ່ຽວກັບການປົກປ້ອງເງິນຝາກຂຶ້ນມາ ເພື່ອເປັນເຄື່ອງມື ແລະ ເຮັດໜ້າທີ່ຄຸ້ມຄອງວຽກງານດັ່ງກ່າວ. ຊຶ່ງໃນບົດຄວາມສະບັບນີ້ ຜູ້ຂຽນຈະມານໍາສະເໜີຂໍ້ມູນຈໍານວນໜຶ່ງກ່ຽວກັບການປົກປ້ອງເງິນຝາກໃຫ້ບັນດາທ່ານໄດ້ຮັບຊາບ:

1. **ອົງການທີ່ເຮັດໜ້າທີ່ປົກປ້ອງເງິນຝາກ:** ແມ່ນສໍານັກງານປົກປ້ອງເງິນຝາກ ຫຼື Deposit Protection Office (DPO) ເປັນການຈັດຕັ້ງການເງິນຂອງລັດມີຖານະທຽບເທົ່າກົມ, ເປັນນິຕິບຸກຄົນທີ່ເຄື່ອນໄຫວບໍ່ສະແຫວງຫາຜົນກໍາໄລ ໂດຍຢູ່ພາຍໃຕ້ການຄຸ້ມຄອງຂອງທະນາຄານແຫ່ງ ສປປ ລາວ ເຮັດໜ້າທີ່ ແລະ ປະຕິບັດພາລະບົດບາດໃນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງຜູ້ຝາກເງິນທີ່ຝາກໄວ້ນໍາສະຖາບັນການເງິນທີ່ເປັນສະມາຊິກຂອງຕົນ;
2. **ສະຖາບັນການເງິນ ທີ່ເປັນສະມາຊິກຂອງສໍານັກງານປົກປ້ອງເງິນຝາກ:** ປະກອບມີ ທະນາຄານທຸລະກິດ ແລະ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ (ສກຈຮ) ທີ່ໄດ້ຮັບອະນຸຍາດດໍາເນີນທຸລະກິດຈາກ ທະນາຄານແຫ່ງ ສປປ ລາວ ຊຶ່ງທະນາຄານທຸລະກິດທີ່ສ້າງຕັ້ງຂຶ້ນຢ່າງຖືກຕ້ອງຕາມກົດໝາຍຂອງ ສປປ ລາວ ຕ້ອງໄດ້ເຂົ້າເປັນສະມາຊິກຂອງສໍານັກງານປົກປ້ອງເງິກຝາກແບບບັງຄັບ ສ່ວນສະຖາບັນການເງິນຈຸລະພາກທີ່ຮັບຝາກເງິນ ກໍ່ຕ້ອງເຂົ້າເປັນສະມາຊິກໂດຍມີມາດຖານເງື່ອນໄຂຄົບຖ້ວນຕາມລະບຽບທີ່ໄດ້ກໍານົດໄວ້. ປັດຈຸບັນທະນາຄານທຸລະກິດທີ່ເປັນສະມາຊິກຂອງສໍານັກງານປ້ອງປ້ອງເງິນຝາກ ມີຈໍານວນ 42 ແຫ່ງ ແລະ ສະຖານບັນການເງິນຈຸລະພາກທີ່ຮັບເງິນຝາກ 1 ແຫ່ງ ໂດຍບັນດາທ່ານສາມາດສັງເກດໄດ້ຈາກໃບຢັ້ງຢືນການເປັນສະມາຊິກ ທີ່ຕິດໄວ້ຈຸດບໍລິການຮັບ-ຝາກເງິນຂອງສະມາຊິກເຫຼົ່ານັ້ນ;
3. **ການປົກປ້ອງເງິນຝາກ**: ແມ່ນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງຜູ້ຝາກເງິນທີ່ຝາກໄວ້ກັບສະຖາບັນການເງິນທີ່ເປັນສະມາຊິກຂອງສໍານັກງານປົກປ້ອງເງິນຝາກດ້ວຍການຄຸ້ມຄອງຄວາມສ່ຽງຂອງຜູ້ຝາກເງິນ ເພື່ອໃຫ້ເກີດຄວາມໝັ້ນໃຈໄດ້ວ່າຜູ້ຝາກເງິນຈະໄດ້ຮັບເງິນຝາກຄືນຕາມວົງເງິນປົກປ້ອງ ແລະ ໄລຍະເວລາທີ່ກໍານົດໄວ້ໃນລະບຽບການ ຖ້າຫາກສະຖາບັນການເງິນທີ່ເປັນສະມາຊິກຂອງສໍານັກງານປົກປ້ອງເງິນຝາກນັ້ນ ຕົກຢູ່ໃນສະພາວະລົ້ມລະລາຍ.

   ວຽກງານປົກປ້ອງເງິນຝາກ ເປັນນະໂຍບາຍ ແລະ ແນວທາງຂອງພັກ-ລັດຖະບານ ໃນການປົກປ້ອງຜູ້ຝາກເງິນ ເພື່ອໃຫ້ມີຄວາມເຊື່ອໝັ້ນຕໍ່ລະບົບທະນາຄານ ແລະ ສະຖາບັນການເງິນໃນ ສປປ ລາວ ຊຶ່ງຫຼາຍໆປະເທດແມ່ນໄດ້ໃຫ້ຄວາມສໍາຄັນ ໂດຍໄດ້ສ້າງຕັ້ງອົງການທີ່ຮັບຜິດຊອບວຽກງານດັ່ງກ່າວຂຶ້ນມາ ຊຶ່ງໃນແຕ່ລະປະເທດກໍຈະມີຊື່ເອີ້ນແຕກຕ່າງກັນໄປ ຍົກຕົວຢ່າງ ສສ ຫວຽດນາມ ແມ່ນຈະເອີ້ນວ່າ “ປະກັນໄພເງິນຝາກ (Deposit Insurance of Vietnam), ຣາດຊະອານາຈັກໄທ ແມ່ນຈະເອີ້ນວ່າ “ສະຖາບັນຄຸ້ມຄອງເງິນຝາກ (Deposit Protection Agency)”, ເຖິງແມ່ນວ່າຈະມີຊື່ເອີ້ນແຕກຕ່າງກັນກໍຕາມ ແຕ່ອົງການເຫຼົ່ານັ້ນລ້ວນແລ້ວແຕ່ສ້າງຕັ້ງຂຶ້ນມາເພື່ອປະຕິບັດພາລະບົດບາດດຽວກັນຄືການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງຜູ້ຝາກເງິນ ໂດຍຂອບເຂດ ແລະ ວິທີການປົກປ້ອງກໍຈະຂຶ້ນກັບການກໍານົດ ແລະ ສະພາບການຕົວຈິງຂອງແຕ່ລະປະເທດ.
4. **ປະເພດເງິນຝາກທີ່ໄດ້ຮັບການປົກປ້ອງ:** ໄດ້ແກ່ເງິນຝາກຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຝາກໄວ້ກັບສະຖາບັນການເງິນທີ່ເປັນສະມາຊິກຂອງສໍານັກງານປົກປ້ອງເງິນຝາກ ຊຶ່ງປະກອບດ້ວຍ: ເງິນຝາກກະແສລາຍວັນ, ເງິນຝາກປະຢັດ ແລະ ເງິນຝາກມີກໍານົດ ທີ່ເປັນສະກຸນເງິນກີບ ແລະ ສະກຸນເງິນຕາຕ່າງປະເທດ;

5. **ເວລາທີ່ຜູ້ເງິນຝາກໄດ້ຮັບການປົກປ້ອງ:** ຜູ້ຝາກເງິນຈະໄດ້ຮັບການປົກປ້ອງເງິນຝາກໂດຍທັນທີ ທີ່ເປີດບັນຊີເງິນຝາກກັບສະຖາບັນການເງິນທີ່ສະມາຊິກຂອງສຳນັກງານປົກປ້ອງເງິນຝາກ ຊຶ່ງບໍ່ຈຳເປັນຕ້ອງລົງທະບຽນ ຫຼື ຂຽນແບບຟອມໃດໆ. ໃນກໍລະນີທີ່ສະມາຊິກແຫ່ງນັ້ນໄດ້ຖືກຢັ້ງຢືນສະພາວະລົ້ມລະລາຍ ຜູ້ຝາກເງິນສາມາດດຳເນີນການຂໍຮັບເງິນຈາກສຳນັກງານປົກປ້ອງເງິນຝາກໄດ້ຕາມການປະກາດ ຫຼື ແຈ້ງການຂອງທະນາຄານແຫ່ງ ສປປ ລາວ;
6. **ເງິນປົກປ້ອງ**: ແມ່ນເງິນທີ່ສຳນັກງານປົກປ້ອງເງິນຝາກຕ້ອງຈ່າຍຄືນໃຫ້ແກ່ຜູ້ຝາກເງິນເມື່ອສະຖາບັນການເງິນໃດໜຶ່ງທີ່ສະມາຊິກຂອງຕົນຕົກຢູ່ໃນສະພາວະລົ້ມລະລາຍ. ໂດຍຜູ້ຝາກເງິນຈະໄດ້ຮັບເງິນປົກປ້ອງ ໃນວົງເງິນປົກປ້ອງສູງສຸດເທົ່ານັ້ນ ສ່ວນຍອດເງິນທີ່ເກີນວົງເງິນປົກປ້ອງ ແມ່ນໃຫ້ສະເໜີຕໍ່ຄະນະຊຳລະສະສາງ ເພື່ອທົດແທນຄືນພາຍຫຼັງທີ່ສານໄດ້ຕັດສິນໃຫ້ສະຖາບັນການເງິນລົ້ມລະລາຍແລ້ວ. ຊຶ່ງວົງເງິນປົກປ້ອງສູງສຸດທີ່ຜູ້ຝາກເງິນຈະໄດ້ຮັບຈາກສຳນັກງານປົກປ້ອງເງິນຝາກແມ່ນ ຈຳນວນ **ຫ້າສິບລ້ານ (50.000.000)** ກີບ ຕໍ່ຜູ້ຝາກເງິນໜຶ່ງລາຍທີ່ຝາກໄວ້ນຳສະມາຊິກໜຶ່ງແຫ່ງ ໂດຍຄິດໄລ່ລວມທຸກສະກຸນເງິນ ທັງຕົ້ນທຶນ ແລະ ດອກເບ້ຍ ທົ່ວລະບົບສາຂາ ຫຼື ໜ່ວຍບໍລິການຂອງສະມາຊິກແຫ່ງນັ້ນ ແລະ ລວມທຸກບັນຊີເງິນຝາກ. ໃນກໍລະນີຍອດບັນຊີເງິນຝາກຂອງຜູ້ຝາກເງິນ ລວມທັງຕົ້ນທຶນ ແລະ ດອກເບ້ຍ ບໍ່ເກີນວົງເງິນປົກປ້ອງສູງສຸດ (ຫ້າສິບລ້ານກີບ) ເງິນຝາກດັ່ງກ່າວແມ່ນຈະໄດ້ຮັບການປົກປ້ອງທັງໝົດ (**ໝາຍວ່າ:**ສຳນັກງານປົກປ້ອງເງິນຝາກ ຈະຈ່າຍຄືນເງິນຝາກທັງໝົດໃຫ້ແກ່ຜູ້ຝາກເງິນ ກ່ອນສານຕັດສິນໃຫ້ສະຖາບັນການເງິນລົ້ມລະລາຍ);
7. **ວິທີ ຫຼື ຂັ້ນຕອນການຮັບເງິນປົກປ້ອງ:** ພາຍຫຼັງທີ່ທະນາຄານແຫ່ງ ສປປ ລາວ ຢັ້ງຢືນສະພາລົ້ມລະລາຍຂອງສະຖາບັນການເງິນໃດໜຶ່ງທີ່ເປັນສະມາຊິກຂອງສຳນັກງານປ້ອງເງິນຝາກ ສຳນັກງານປົກປ້ອງເງິນຝາກຕ້ອງໄດ້ກະກຽມ ແລະ ວາງແຜນຈ່າຍເງິນປົກປ້ອງໃຫ້ແກ່ຜູ້ຝາກເງິນ ບົນພື້ນຖານການສະເໜີຂອງສະມາຊິກທີ່ຢູ່ໃນສະພາວະລົ້ມລະລາຍແຫ່ງນັ້ນ, ພາຍຫຼັງໄດ້ຮັບການສະເໜີພ້ອມທັງປະກອບຂໍ້ມູນເອກະສານທີ່ກ່ຽວຂ້ອງຢ່າງຖືກຕ້ອງຄົບຖ້ວນແລ້ວ ສຳນັກງານປົກປ້ອງເງິນຝາກຈະປະກາດໃຫ້ຜູ້ຝາກເງິນຊາບ ກ່ຽວກັບແຜນການຈ່າຍຄືນເງິນປົກປ້ອງ ພ້ອມທັງກຳນົດວັນເວລາ, ສະຖານທີ່ ແລະ ວິທີການຮັບເງິນປົກປ້ອງຜ່ານສື່ມວນຊົນ. ຊຶ່ງຜູ້ຝາກເງິນສາມາດຮັບເງິນປົກປ້ອງ ໂດຍປະກອບເອກະສານຂໍຮັບເງິນປົກປ້ອງ ຕາມແບບພິມທີ່ສຳນັກງານປົກປ້ອງເງິນຝາກກຳນົດໄວ້ ພາຍໃນເວລາ 90 ວັນ ນັບແຕ່ມື້ເລີ່ມປະກາດໃຫ້ມາຍື່ນເອກະສານ. ໃນກໍລະນີທີ່ຜູ້ຝາກເງິນ ບໍ່ມາຍື່ນເອກະສານຕາມກຳນົດເວລາດັ່ງກ່າວ ຜູ້ຝາກເງິນສາມາດສະເໜີຂໍຮັບເງິນຝາກລວມທັງຕົ້ນທຶນ ແລະ ດອກເບ້ຍ ກັບຄະນະຊຳລະສະສາງ ພາຍຫຼັງທີ່ສານຕັດສິນໃຫ້ສະຖາບັນການເງິນແຫ່ງນັ້ນລົ້ມລະລາຍ;
8. **ສິດຂອງຜູ້ຝາກເງິນ:** ຜູ້ຝາກເງິນ ມີສິດໃນການສຶກສາຂໍ້ມູນຂອງທະນາຄານທຸລະກິດ ຫຼື ສະຖາບັນການເງິນກ່ຽວກັບນະໂຍບາຍປົກປ້ອງເງິນຝາກຢ່າງລະອຽດກ່ອນຕັດສິນໃຈເປີດບັນຊີເງິນຝາກ, ໄດ້ຮັບຂໍ້ມູນກ່ຽວກັບການປົກປ້ອງເງິນຝາກຈາກສະມາຊິກ ແລະ ສຳນັກງານປົກປ້ອງເງິນຝາກ, ໄດ້ຮັບການປົກປ້ອງເງິນຝາກ ຕາມວົງເງິນປົກປ້ອງ ແລະ ຕາມກຳນົດເວລາ ພ້ອມທັງຮ້ອງທຸກຕໍ່ການຈັດຕັ້ງທີ່ກ່ຽວຂ້ອງ ຫາກມີການລະເມີດສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ;

ທ່ານຜູ້ອ່ານທີ່ຮັກແພງ ທີ່ກ່າວມາຂ້າງເທິງນັ້ນ ກໍແມ່ນຂໍ້ຄວນຮູ້ຈຳນວນໜຶ່ງກ່ຽວກັບການປົກປ້ອງເງິນຝາກຊຶ່ງການປົກປ້ອງເງິນຝາກນີ້ຖືເປັນສິ່ງສຳຄັນ ທີ່ຊ່ວຍຮັບປະກັນຄວາມສ່ຽງຂອງບັນດາທ່ານໂດຍສະເພາະຜູ້ຝາກເງິນເພື່ອໃຫ້ໄດ້ຮັບເງິນຝາກຄືນເມື່ອທະນາຄານທຸລະກິດ ຫຼື ສະຖາບັນການເງິນທີ່ໄປຝາກເງິນນຳນັ້ນລົ້ມລະລາຍ ທັງເປັນການສ້າງຄວາມເຊື່ອໝັ້ນໃຫ້ແກ່ສັງຄົມຕໍ່ລະບົບສະຖາບັນການເງິນ ແລະ ປະກອບໃນການຮັກສາສະຖຽນລະພາບການເງິນ-ເງິນຕາຢູ່ ສປປ ລາວອີກດ້ວຍ.

ທ້າຍນີ້, ຫວັງຢ່າງຍິ່ງວ່າຂໍ້ມູນທີ່ໄດ້ນຳສະເໜີໄປນັ້ນຈະເປັນປະໂຫຍດແກ່ບັນດາທ່ານ ຖ້າຫາກທ່ານຜູ້ອ່ານທ່ານໃດມີຄວາມສົນໃຈ ຫຼື ຕ້ອງການສຶກສາຂໍ້ມູນເພີ່ມຕື່ມກ່ຽວກັບຂະແໜງການເງິນ-ການທະນາຄານ ກໍສາມາດເຂົ້າໄປທີ່ ເວັບໄຊ www.bol.gov.la

**# ໂດຍ: ນ. ຄຳເບົ້າ ສຸວໍລະວົງ ກົມນິຕິກຳ ທະນາຄານແຫ່ງ ສປປ ລາວ**